ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ພະແນກອຸດສາຫະກຳ ແລະ ການຄ້າແຂວງ

ເລກທີ:....2351/ອຄ

ສະຫວັນນະເຂດ, ວັນທີ:01...ເມສາ...2026

# ແຈ້ງການປະມູນ

ເຖິງ : ທ່ານຜູ້ອຳນວຍການບໍລິສັດ ກໍ່ສ້າງ ແລະ ຕິດຕັ້ງໄຟຟ້າທົ່ວແຂວງສະຫວັນນະເຂດ.

ເລື່ອງ: ປະມູນໂຄງການກໍ່ສ້າງຕາຂ່າຍໄຟຟ້າ 22/0,4KV ພ້ອມຕິດຕັ້ງໝໍ້ແປງໄຟຟ້າ ເຂົ້າບ້ານ ກົກໝາກ, ບ້ານ ຕະປ໋ອຍ ແລະ ໂຮງຮຽນຈຸດສຸມຜາບັງ ເມືອງ ເຊໂປນ ແຂວງສະຫວັນນະເຂດ.

- ອີງຕາມ ຂໍ້ຕົກລົງ, ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງພະແນກອຸດສາຫະກຳ ແລະ ການຄ້າແຂວງ, ສະບັບເລກທີ 2655/ອຄ, ລົງວັນທີ 31 ຕຸລາ 2025.
- ອີງຕາມ ແຈ້ງການຂອງພະແນກ ການເງິນ ແຂວງ ສະບັບເລກທີ 461/ກງຂ, ລົງວັນທີ 20 ກຸມພາ 2026;
- ອີງໃສ່ຄຳແນະນຳກ່ຽວກັບການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍການຈັດຊື້-ຈັດຈ້າງດ້ວຍທຶນລັດເລກທີ0477/ກງ ,ລົງວັນທີ 13 ກຸມພາ 2019.

ພະແນກອຸດສາຫະກຳ ແລະ ການຄ້າແຂວງ, ຂໍແຈ້ງມາຍັງທ່ານຜູ້ອຳນວຍການ ບໍລິສັດ ເຂົ້າຮ່ວມການປະມູນ ໂຄງການກໍ່ສ້າງຕາຂ່າຍໄຟຟ້າ 22/0,4KV ແລະຕິດຕັ້ງໝໍ້ແປງ ເຂົ້າບ້ານ ກົກໝາກ, ບ້ານ ຕະປ໋ອຍ ແລະ ໂຮງຮຽນຈຸດສຸມຜາບັງ ເມືອງ ເຊໂປນ ແຂວງສະຫວັນນະເຂດ.

ຖ້າບໍລິສັດມີຄວາມສົນໃຈເຂົ້າຮ່ວມປະມູນ ໃຫ້ມາພົວພັນຊື້ເອກະສານການປະມູນນຳ ພະແນກ ອຸດສາຫະກຳ ແລະ ການຄ້າ ແຂວງ ( ຂະແໜງບໍລິຫານ, ແຜນການ ແລະ ຈັດຕັ້ງ ) ໃນວັນເວລາລັດຖະການ.

- ກຳນົດວັນເວລາຂາຍຊອງ ເລີ່ມແຕ່ວັນທີ 6 – 28 ເມສາ 2026.

- ກຳນົດເປີດຊອງໃນວັນທີ 29-30 ເມສາ 2026 ເວລາ 09 ໂມງ 30 ນາທີ

ທີ່ຫ້ອງປະຊຸມພະແນກອຸດສາຫະກຳ ແລະ ການຄ້າ ແຂວງສະຫວັນນະເຂດ.

+ ເງື່ອນໄຂຂອງບໍລິສັດເຂົ້າຮ່ວມການປະມູນ:

- ບໍລິສັດທີ່ເຂົ້າຮ່ວມການປະມູນຕ້ອງບໍ່ເຄີຍມີຄະດີມາກ່ອນ ແລະ ຕ້ອງມີທຶນພຽງພໍຕໍ່ການກໍ່ສ້າງໂຄງການດັ່ງກ່າວໃຫ້ສຳເລັດຕາມແຜນການ ແລະ ມີຄຸນນະພາບ.
- ບໍລິສັດທີ່ເຂົ້າຮ່ວມການປະມູນຕ້ອງມີໃບອະນຸຍາດດຳເນີນທຸລະກິດ, ໃບທະບຽນອາກອນ, ໃບທະບຽນວິສາຫະກິດຖືກຕ້ອງຕາມລະບຽບກົດໝາຍ ແລະ ເປັນບໍລິສັດທີ່ມີສຳນັກງານຖາວອນຕັ້ງຢູ່ພາຍໃນແຂວງສະຫວັນນະເຂດ.

+ ລາຍລະອຽດ: ໃຫ້ທ່ານພົວພັນຂະແໜງບໍລິຫານ, ແຜນການ ແລະ ຈັດຕັ້ງ ພະແນກອຸດສາຫະກຳ ແລະ ການຄ້າແຂວງ. ໂທ/ແຟັກ 041- 212 170 – 020 5484 9495.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານເພື່ອຊາບ ແລະ ເຂົ້າຮ່ວມການປະມູນໃນຄັ້ງນີ້ດ້ວຍ.

ຫົວໜ້າພະແນກ

ສີໂທ ທໍລະທາ

Sytho THORATHA